ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ສຳນັກງານນາຍົກລັດຖະມົນຕີ

ເລກທີ 85 /ນຍ

ນະຄອນຫຼວງວຽງຈັນ, ວັນທີ 01.03.2007.

# ດຳລັດ

## ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ຄະນະກຳມາທິການແຫ່ງຊາດກ່ຽວກັບການປະຕິຮູບລະບົບການສຶກສາແຫ່ງຊາດ

- ອີງຕາມກົດໝາຍວ່າດ້ວຍລັດຖະບານແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ສະບັບ ເລກທີ 02/ສພຊ, ລົງວັນທີ 6 ພຶດສະພາ 2003.
- ອີງຕາມກົດໝາຍວ່າດ້ວຍການສຶກສາແຫ່ງຊາດ ເລກທີ 03/ສພຊ, ລົງວັນທີ 8 ເມສາ 2000.
- ອີງຕາມດຳລັດຂອງນາຍົກລັດຖະມົນຕີ ສະບັບເລກທີ 69/ນຍ, ລົງວັນທີ 24 ມີນາ 2005 ວ່າດ້ວຍ ການຮັບຮອງເອົາແຜນປະຕິບັດງານແຫ່ງຊາດການສຶກສາເພື່ອທຸກຄົນ 2003-2015.
- ອີງຕາມການສະເໜີ ຂອງກະຊວງສຶກສາທິການ ສະບັບເລກທີ 966/ສສ/06, ລົງວັນທີ 29/12/2006.

## ນາຍົກລັດຖະມົນຕີ ອອກດຳລັດ:

## ໝວດທີ I
## ບົດບັນຍັດທົ່ວໄປ

### ມາດຕາ 1. ຈຸດປະສົງ

ດຳລັດສະບັບນີ້ກຳນົດພາລະບົດບາດ, ໜ້າທີ່ຂອບເຂດສິດ, ໂຄງປະກອບການຈັດຕັ້ງ ແລະ ແບບແຜນວິທີເຮັດວຽກຂອງຄະນະກຳມາທິການແຫ່ງຊາດກ່ຽວກັບການປະຕິຮູບລະບົບການສຶກສາແຫ່ງຊາດ, ເປັນບ່ອນອີງໃຫ້ແກ່ການຈັດຕັ້ງ ແລະ ການເຄື່ອນໄຫວຂອງຄະນະກຳມາທິການດັ່ງກ່າວ ໃນການສ້າງແຜນການປະຕິຮູບ ແລະ ສ້າງຄວາມອາດສາມາດໃນການປຸກລະດົມສິ່ງເສີມອົງການ ຈັດຕັ້ງລັດ, ອົງການຈັດຕັ້ງມະຫາຊົນ ແລະ ສັງຄົມໃນທົ່ວປະເທດ ຈັດຕັ້ງຜັນຂະຫຍາຍແຜນຍຸດທະສາດການປະ ຕິຮູບລະບົບການສຶກສາແຫ່ງຊາດໃຫ້ບັນລຸຜົນສຳເລັດຕາມແຜນການທີ່ກຳນົດໄວ້.

## ໝວດທີ II
## ທີ່ຕັ້ງ ແລະ ພາລະບົດບາດ

**ມາດຕາ 2. ທີ່ຕັ້ງ ແລະ ພາລະບົດບາດ**

ຄະນະກຳມາທິການແຫ່ງຊາດກ່ຽວກັບການປະຕິຮູບລະບົບການສຶກສາແຫ່ງຊາດເປັນອົງການຈັດຕັ້ງ ຂອງລັດຖະບານທີ່ເຄື່ອນໄຫວບໍ່ປະຈຳການ ທີ່ມີຊື່ຫຍໍ້ວ່າ ( ຄປສຊ ) ມີພາລະບົດບາດຊ່ວຍລັດຖະບານ ແລະ ນາຍົກລັດຖະມົນຕີ ໃນການຈັດຕັ້ງຜັນຂະຫຍາຍ ແຜນຍຸດທະສາດການປະຕິຮູບລະບົບການສຶກສາແຫ່ງຊາດ ແລະ ປຸກລະດົມຂົນຂວາຍທຶນຮອນ ແລະ ການປະກອບສ່ວນຂອງສັງຄົມໃຫ້ແກ່ການປະຕິຮູບການການສຶກສາ.

## ໝວດທີ III
## ໂຄງປະກອບການຈັດຕັ້ງ

**ມາດຕາ 3. ໂຄງປະກອບບຸກຄະລາກອນ**

ຄະນະກຳມາທິການແຫ່ງຊາດກ່ຽວກັບການປະຕິຮູບລະບົບການສຶກສາແຫ່ງຊາດປະກອບດ້ວຍ ບັນດາທ່ານດັ່ງລຸ່ມນີ້:

| | |
|---|---|
| 1. ທ່ານ ຮອງນາຍົກລັດຖະມົນຕີ, ຜູ້ປະຈຳການລັດຖະບານ | ເປັນປະທານ |
| 2. ທ່ານ ລັດຖະມົນຕີວ່າການ ກະຊວງສຶກສາທິການ | ເປັນຮອງປະທານ |
| 3. ທ່ານ ລັດຖະມົນຕີຊ່ວຍວ່າການ ກະຊວງການເງິນ | ເປັນຮອງປະທານ |
| 4. ທ່ານ ຮອງປະທານຄະນະກຳມະການແຜນການ ແລະ ການລົງທຶນ | ເປັນຮອງປະທານ |
| 5. ທ່ານ ລັດຖະມົນຕີຊ່ວຍວ່າການ ກະຊວງການຕ່າງປະເທດ | ເປັນກຳມະການ |
| 6. ທ່ານ ຮອງຫົວໜ້າ ຄະນະຈັດຕັ້ງສູນກາງພັກ | ເປັນກຳມະການ |
| 7. ທ່ານ ຮອງປະທານຄະນະກຳມາທິການວັດທະນະທຳສັງຄົມ ສະພາແຫ່ງຊາດ | ເປັນກຳມະການ |
| 8. ທ່ານ ລັດຖະມົນຕີຊ່ວຍວ່າການ ກະຊວງຍຸຕິທຳ | ເປັນກຳມະການ |
| 9. ທ່ານ ລັດຖະມົນຕີຊ່ວຍວ່າການ ກະຊວງສາທາລະນະສຸກ | ເປັນກຳມະການ |
| 10. ທ່ານ ລັດຖະມົນຕີຊ່ວຍວ່າການ ກະຊວງຖະແຫຼງຂ່າວ ແລະ ວັດທະນະທຳ | ເປັນກຳມະການ |
| 11. ທ່ານ ລັດຖະມົນຕີຊ່ວຍວ່າການ ກະຊວງກະສິກຳ ແລະ ປ່າໄມ້ | ເປັນກຳມະການ |
| 12. ທ່ານ ລັດຖະມົນຕີຊ່ວຍວ່າການ ກະຊວງແຮງງານ ແລະ ສະຫວັດດີການສັງຄົມ | ເປັນກຳມະການ |
| 13. ທ່ານ ຮອງປະທານ ສູນກາງສະຫະພັນແມ່ຍິງລາວ | ເປັນກຳມະການ |
| 14. ທ່ານ ຮອງເລຂາ ສູນກາງຊາວໜຸ່ມປະຊາຊົນປະຕິວັດລາວ | ເປັນກຳມະການ |
| 15. ທ່ານ ລັດຖະມົນຕີຊ່ວຍວ່າການ ກະຊວງສຶກສາທິການ (ຜູ້ຊີ້ນຳກອງເລຂາ) | ເປັນກຳມະການ ແລະ ເປັນເລຂາທິການ |

**ມາດຕາ 4. ໂຄງປະກອບກົງຈັກຊ່ວຍວຽກ**

ຄະນະກຳມາທິການແຫ່ງຊາດກ່ຽວກັບການປະຕິຮູບລະບົບການສຶກສາແຫ່ງຊາດມີກົງຈັກຊ່ວຍວຽກຂອງຕົນ ເອີ້ນວ່າ: **ກອງເລຂາ** ຊຶ່ງປະກອບດ້ວຍ ຫົວໜ້າກົມຂອງກະຊວງສຶກສາທິການ :

1. ທ່ານ ຫົວໜ້າກົມແຜນການ ແລະ ການຮ່ວມມືສາກົນ ເປັນຫົວໜ້າ,
2. ທ່ານ ຜູ້ອຳນວຍການສະຖາບັນຄົ້ນຄ້ວາວິທະຍາສາດການສຶກສາ ເປັນຮອງ,
3. ທ່ານ ຫົວໜ້າກົມສາມັນສຶກສາ ເປັນຄະນະ

## ໝວດທີ່ IV

## ໜ້າທີ່ ແລະ ຂອບເຂດສິດ

**ມາດຕາ 5. ໜ້າທີ່**

ຄະນະກຳມາທິການແຫ່ງຊາດກ່ຽວກັບການປະຕິຮູບລະບົບການສຶກສາແຫ່ງຊາດມີໜ້າທີ່ຕົ້ນຕໍດັ່ງນີ້:

1. ພິຈາລະນາຮັບຮອງເອົາແຜນການການປະຕິຮູບລະບົບການສຶກສາແຫ່ງຊາດ ແລະ ລະບົບການສຶກສາ ແຫ່ງຊາດທີ່ປະຕິຮູບໃໝ່.
2. ສະເໜີລັດຖະບານ ແລະ ສະພາແຫ່ງຊາດເພື່ອພິຈາລະນາຮັບຮອງລະບົບການສຶກສາໃໝ່ ແລະ ລະບຽບກົດໝາຍນິຕິກຳຕ່າງໆທີ່ຈຳເປັນໃຫ້ແກ່ການປະຕິຮູບລະບົບການສຶກສາ.
3. ເປັນໃຈກາງໃນການຊີ້ນຳ, ປະສານງານກັບບັນດາກະຊວງ, ຄະນະກຳມະການທຽບເທົ່າ ແລະ ອົງການປົກຄອງທ້ອງຖິ່ນຂັ້ນຕ່າງໆ ແລະ ພົວພັນຮ່ວມມືກັບຕ່າງປະເທດເພື່ອຜັນຂະຫຍາຍ ແຜນການການປະຕິຮູບລະບົບການສຶກສາແຫ່ງຊາດ.
4. ປຸກລະດົມຂົນຂວາຍແຫລ່ງທຶນຈາກພາກລັດ ແລະ ພາກເອກະຊົນທັງພາຍໃນ ແລະ ຕ່າງປະເທດໃຫ້ແກ່ການຈັດຕັ້ງປະຕິບັດການປະຕິຮູບລະບົບການສຶກສາແຫ່ງຊາດ.

**ມາດຕາ 6. ຂອບເຂດສິດ**

ຄະນະກຳມາທິການແຫ່ງຊາດກ່ຽວກັບການປະຕິຮູບລະບົບການສຶກສາແຫ່ງຊາດມີສິດດັ່ງນີ້:

1. ປຸກລະດົມທຸກກຳລັງໃນສັງຄົມເພື່ອປະກອບສ່ວນໃຫ້ແກ່ການຄົ້ນຄວ້າການປະຕິຮູບລະບົບການສຶກສາ ແຫ່ງຊາດ.
2. ພົວພັນ, ປະສານງານ, ແລກປ່ຽນບົດຮຽນ ແລະ ຂໍ້ມູນຂ່າວສານກັບບັນດາຂະແໜງການ ສູນກາງ ແລະ ທ້ອງຖິ່ນພາຍໃນປະເທດ ແລະ ຕ່າງປະເທດເພື່ອຈັດຕັ້ງປະຕິບັດແຜນຍຸດທະສາດການປະຕິຮູບລະບົບການສຶກສາແຫ່ງຊາດໃຫ້ມີຜົນສຳເລັດ.
3. ແຕ່ງຕັ້ງກອງເລຂາ ແລະ ຄະນະກຳມະການຕ່າງໆ ທີ່ຈຳເປັນເພື່ອຄົ້ນຄວ້າໃນແຕ່ລະວຽກງານ ໃນການຈັດຕັ້ງປະຕິບັດ ແຜນຍຸດທະສາດການປະຕິຮູບລະບົບການສຶກສາແຫ່ງຊາດ.

## ໝວດທີ V
## ແບບແຜນວິທີເຮັດວຽກ

**ມາດຕາ 7. ແບບແຜນວິທີເຮັດວຽກ**

ຄະນະກຳມາທິການແຫ່ງຊາດກ່ຽວກັບການປະຕິຮູບລະບົບການສຶກສາແຫ່ງຊາດເຄື່ອນໄຫວວຽກງານແບບບໍ່ປະຈຳການຖືເອົາກອງປະຊຸມເປັນຮູບການເຄື່ອນໄຫວຕົ້ນຕໍ. ກອງປະຊຸມຄົບຄະນະຕາມປົກກະຕິຂອງຄະນະກຳມາທິການແຫ່ງຊາດແມ່ນຈັດຂຶ້ນໃນກຳນົດປີລະສອງເທື່ອ; ໃນກໍລະນີຈຳເປັນ ອາດປະຊຸມຫຼາຍເທື່ອກໍ່ໄດ້. ໃນການຕັດສິນບັນຫາຕ່າງໆໃຫ້ຖືເອົາສຽງສ່ວນຫຼາຍ ເປັນອັນຕັດສິນ.

## ໝວດທີ VI
## ບົດບັນຍັດສຸດທ້າຍ

**ມາດຕາ 8. ການຜັນຂະຫຍາຍ**

ມອບໃຫ້ປະທານຄະນະກຳມາທິການແຫ່ງຊາດກ່ຽວກັບການປະຕິຮູບລະບົບການສຶກສາແຫ່ງຊາດເປັນ ຜູ້ຜັນຂະຫຍາຍ, ກຳນົດພາລະບົດບາດ, ສິດໜ້າທີ່ ແລະ ຄວາມຮັບຜິດຊອບລະອຽດໃຫ້ແກ່ ກອງເລຂາ, ຄະນະກຳມະການຕ່າງໆ ແລະ ກຳມະການແຕ່ລະທ່ານ..

**ມາດຕາ 9. ຕາປະທັບ**

ຄະນະກຳມາທິການແຫ່ງຊາດກ່ຽວກັບການປະຕິຮູບລະບົບການສຶກສາແຫ່ງຊາດ ນຳໃຊ້ຕາປະທັບຂອງກົມແຜນການ-ການຮ່ວມມືສາກົນ ກະຊວງສຶກສາທິການ ເພື່ອນຳໃຊ້ເຂົ້າໃນວຽກງານທາງລັດຖະການ.

**ມາດຕາ 10. ງົບປະມານ**

ງົບປະມານຮັບໃຊ້ການເຄື່ອນໄຫວວຽກງານ ຂອງຄະນະກຳມາທິການແຫ່ງຊາດ, ກອງເລຂາ ແລະ ຄະນະກຳມະການຕ່າງໆກ່ຽວກັບການປະຕິຮູບລະບົບການສຶກສາແຫ່ງຊາດແມ່ນຂຶ້ນກັບງົບປະມານປະຈຳປີຂອງຂະແໜງການສຶກສາ.

**ມາດຕາ 11. ການຈັດຕັ້ງປະຕິບັດ**

ບັນດາກະຊວງ, ອົງການທຽບເທົ່າກະຊວງ, ບັນດາແຂວງ ນະຄອນ ແລະ ພາກສ່ວນທີ່ກ່ຽວຂ້ອງຈົ່ງຮັບຮູ້ໃຫ້ຄວາມຮ່ວມມື ແລະ ຈັດຕັ້ງປະຕິບັດດຳລັດສະບັບນີ້ຢ່າງເຂັ້ມງວດ ແລະ ໃຫ້ໄດ້ຮັບຜົນດີ.

**ມາດຕາ 12. ຜົນສັກສິດ**

ດຳລັດສະບັບນີ້ມີຜົນສັກສິດນັບແຕ່ວັນ ທີ່ລົງລາຍເຊັນເປັນຕົ້ນໄປ.

ນາຍົກລັດຖະມົນຕີ ແຫ່ງ ສ ປປ ລາວ

ບົວສອນ ບຸບຜາວັນ